ຫ້ອງວ່າການລັດຖະບານ

ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ (ຄພທສ)

ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ)

---

# ບົດສະຫຼຸບປະຈຳເດືອນ

# ກ່ຽວກັບການຈັດຕັ້ງປະຕິບັດໂຄງການຍ່ອຍ ທລຍ

## ພະຈິກ 2015

ຄະນະ-ຮັບຜິດຊອບ ທລຍ ສູນກາງ

*ກະກຽມໂດຍ:* ໜ່ວຍງານຕິດຕາມ-ປະເມີນຜົນ

14 ທັນວາ 2015

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການລັດຖະບານ
ຄະນະພັດທະນາຊົນນະບົດ ແລະ
ລົບລ້າງຄວາມທຸກຍາກ ຂັ້ນສູນກາງ (ຄພທສ)
**ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ)** ເລກທີ່..1.1.3..3..ທລຍ

# ບົດສະຫຼຸບປະຈຳເດືອນ ພະຈິກ
# ແລະ ແຜນວຽກເດືອນ ທັນວາ 2015

ໃນເດືອນ ພະຈິກ ທີ່ຜ່ານມາ 2015 ທີ່ຜ່ານມາ ທລຍ ແມ່ນໄດ້ສຸມໃສ່ ການຈັດຕັ້ງປະຕິບັດວຽກງານສຳລັບສົກປີ 2015-2016 ຖືວ່າເປັນໄລຍະສຸດທ້າຍຂອງການເຄື່ອນໄຫວຂອງ ທລຍ ໄລຍະທີ່ 2 ສະນັ້ນທາງຄະນະຮັບຜິດຊອບແມ່ນໄດ້ສຸມໃສ່ການສະຫລຸບ-ສັງລວມວຽກງານຕ່າງໆ ໃຫ້ປະສົບຜົນສຳເລັດ ທັງເປັນການກະກຽມໃຫ້ແກ່ການອອກແບບ ທລຍ 3. ວຽກງານທີ່ພົ້ນເດັ່ນທີ່ສຸດແມ່ນ ສຳເລັດການເຮັດບົດສະຫລຸບ ແລະ ຕີລາຄາຜົນໄດ້ຮັບຂອງ ທລຍ ຕະຫລອດ 1 ປີຜ່ານມາໃສ່ບົດລາຍງານປະຈຳປີ ເພື່ອລາຍງານຕໍ່ລັດຖະບານ ແລະ ຜູ້ໃຫ້ທຶນ.

ທລຍ ໄດ້ເອົາໃຈໃສ່ຕິດຕາມບັນດາໂຄງການທີ່ໄດ້ຮັບທີ່ໄດ້ຮັບການຊ່ວຍເຫລືອໄລຍະທີ່ຜ່ານມາເພື່ອຮັບປະກັນວ່າໂຄງການເຫລົ່ານັ້ນຍັງສາມາດອຳນວຍຄວາມສະດວກຕໍ່ຊີວິດການເປັນຢູ່ຂອງພໍ່ແມ່ປະຊາຊົນ ແລະໃນກໍລະນີໂຄງການຫາກເປ່ເພກໍ່ຊອກຫາວິທີທາງອອກເພື່ອໃຫ້ມີການສ້ອມແປງຄືນໃຫມ່. ແຕ່ປີ 2012-2015 ທລຍ ໄດ້ໃຫ້ການຊ່ວຍເຫລືອ ທັງໝົດ 1,426 ໂຄງການ ແລະມາຮອດທ້າຍເດືອນ ພະຈິກ 2015 ມີຈຳນວນ 1,352 ໂຄງການຖືກຈັດຕັ້ງປະຕິບັດສຳເລັດ ແລະ ນຳໃຊ້ງົບປະມານທັງໝົດ 266,904,464,258 ຕື້ກີບ.

ສຳລັບສົກປີ 2015-2016 ແມ່ນໄດ້ສຳເລັດການທົບທວນແຜນໃນແຕ່ລະເມືອງສຳລັບໂຄງການພາຍໃຕ້ທຶນຊ່ວຍເຫລືອຂອງຕ່າງປະເທດ ສຳລັບບັນດາໂຄງການພາຍໄຕ້ທຶນສົມທົບຂອງລັດຖະບານ 2 ລ້ານໂດລາສະຫະລັດມີຈຳນວນ 52 ໂຄງການຢູ່ໃນຂັ້ນຕອນການຈັດຕັ້ງປະຕິບັດໃນແຕ່ລະແຂວງ ສະນັ້ນຈຳນວນໂຄງການ ແລະ ງົບປະມານທັງໝົດທີ່ ທລຍ ຄາດວ່າຈະນຳໃຊ້ໃນສົກປີດັ່ງກ່າວຈະໄດ້ລາຍງານໃນເດືອນ ທັນວາ 2015.

ສິ່ງທີ່ພົ້ນເດັ່ນອັນໜຶ່ງແມ່ນການກະກຽມຄວາມພ້ອມສຳຫລັບການປະເມີນຂອງບັນດາຜູ້ໃຫ້ທຶນໃນລະຫວ່າງວັນທີ 30 ພະຈິກ - 11 ທັນວາ 2015 ເພື່ອການກະກຽມຄວາມພ້ອມສຳລັບ ທລຍ 3 ເປັນຕົ້ນກ່ຽວກັບຂອບເຂດການຈັດຕັ້ງປະຕິບັດ, ແຫລ່ງທຶນ ແລະ ການເລີ່ມຕົ້ນຂອງໂຄງການ ແຕ່ສິ່ງສຳຄັນອີກປະການໜຶ່ງແມ່ນການປຶກສາຫາລືກ່ຽວກັບໄລຍະເວລາ ແລະ ສິ່ງທີ່ຕ້ອງໄດ້ປະຕິກ່ອນໂຄງການ ທລຍ 2 ຈະສິ້ນສຸດ.

## 1. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ

### 1.1 *<u>ຮອບວຽນ 12 (ສົກປີ 2014-2015)</u>*

ສຳລັບຮອບວຽນ 12 (ສົກປີ 2014-2015) ມີຈຳນວນທັງໝົດ 438 ໂຄງການຍ່ອຍ ໃນນັ້ນຈຳນວນໂຄງການຍ່ອຍພາຍໃຕ້ທຶນພາຍໃນ ມີ 74 ໂຄງການ ເປັນມູນຄ່າປະມານ 16 ຕື້ກີບ ທີ່ໄດ້ຜ່ານການປະມູນແລ້ວ. ໃນນັ້ນຈັດຕັ້ງປະຕິບັດສຳເລັດແລ້ວ 100% ມີ 371 ໂຄງການເທົ່າກັບ 84.7 %, ຄວາມຄືບໜ້າຫລາຍກວ່າ 50% ມີ 40 ໂຄງການ, ໜ້ອຍກວ່າ 50% ມີ 14 ໂຄງການ ສ່ວນທີ່ເຫລືອ 13 ໂຄງການແມ່ນກຳລັງກະກຽມເພື່ອຈັດຕັ້ງປະຕິບັດ ດັ່ງລາຍລະອຽດຕາມຕາຕະລາງລຸ່ມນີ້:

**ຕາຕະລາງ 1. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 12**

| ແຂວງ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ສະຫວັນນະເຂດ | 59 | 54 | 2 | 0 | 3 |
| ສາລະວັນ | 31 | 12 | 19 | 0 | 0 |
| ຊຽງຂວາງ | 42 | 42 | 0 | 0 | 0 |
| ບໍ່ລິຄຳໄຊ | 25 | 13 | 6 | 4 | 2 |
| ຫລວງນ້ຳທາ | 21 | 17 | 1 | 1 | 2 |
| ຫົວພັນ | 124 | 123 | 1 | 0 | 0 |
| ຫຼວງພະບາງ | 48 | 36 | 2 | 6 | 4 |
| ອຸດົມໄຊ | 50 | 45 | 2 | 1 | 2 |
| ອັດຕະປື | 18 | 15 | 2 | 1 | 0 |
| ເຊກອງ | 20 | 14 | 5 | 1 | 0 |
| ລວມ | **438** | **371** | **40** | **14** | **13** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ກລຍ, 30 ພະຈິກ 2015*

**ຕາຕະລາງ 2. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 12 (ແຍກຕາມຂະແໜງການ)**

| ຂະແໜງການ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ກະສິກຳ ແລະ ປ່າໄມ້ | 41 | 38 | 2 | 0 | 1 |
| ຄົມມະນາຄົມ | 75 | 57 | 7 | 7 | 4 |
| ສາທາລະນະສຸກ | 23 | 20 | 3 | 0 | 0 |
| ສຶກສາ | 165 | 141 | 13 | 6 | 5 |
| ນ້ຳສະອາດ ແລະ ສຸຂະອະນາໄມ | 132 | 114 | 15 | 1 | 2 |
| ພະລັງງານ ແລະ ບໍ່ແຮ່ | 2 | 1 | 0 | 0 | 1 |
| ລວມ | **438** | **371** | **40** | **14** | **13** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ກລຍ, 30 ພະຈິກ 2015*

## 1.2. ຮອບວຽນ 11 (ສົກປີ 2013-2014)

ການຈັດຕັ້ງປະຕິບັດມາຮອດທ້າຍເດືອນ ກັນຍາ 2015 ມີຄວາມຄືບໜ້າດັ່ງນີ້: ຈາກທັງໝົດ 333 ໂຄງການ, 328 ໂຄງການ (98.4%) ແມ່ນໄດ້ຈັດຕັ້ງປະຕິບັດສຳເລັດ 100%, ສຳລັບໂຄງການທີ່ມີຄວາມຄືບໜ້າຫລາຍກວ່າ 50% ແມ່ນມີຈຳນວນ 5 ໂຄງການ ແລະ ຄາດວ່າຈະສຳເລັດໃນມໍ່ໆ ນີ້. ອີງຕາມຕາຕະລາງຂ້າງລຸ່ມນີ້ ເຫັນວ່າທຸກໂຄງການ ໃນຮອບວຽນດັ່ງກ່າວ ແມ່ນໄດ້ເລີ່ມຈັດຕັ້ງປະຕິບັດທັງໝົດດັ່ງລາຍລະອຽດຕາມຕາຕະລາງ 3 ແລະ 4.

**ຕາຕະລາງ 3. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 11**

| ແຂວງ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ສະຫວັນນະເຂດ | 45 | 45 | 0 | 0 | 0 |
| ສາລະວັນ | 16 | 16 | 0 | 0 | 0 |
| ຊຽງຂວາງ | 29 | 29 | 0 | 0 | 0 |
| ຜົ້ງສາລີ | 23 | 23 | 0 | 0 | 0 |
| ຫຼວງນ້ຳທາ | 16 | 14 | 2 | 0 | 0 |
| ຫົວພັນ | 69 | 69 | 0 | 0 | 0 |
| ຫຼວງພະບາງ | 43 | 42 | 1 | 0 | 0 |
| ອຸດົມໄຊ | 54 | 54 | 0 | 0 | 0 |
| ອັດຕະປື | 18 | 16 | 2 | 0 | 0 |
| ເຊກອງ | 20 | 20 | 0 | 0 | 0 |
| **ລວມ** | **333** | **328** | **5** | **0** | **0** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 30 ພະຈິກ 2015*

ຈາກຕາຕະລາງຂ້າງເທິງນີ້ 7 ໂຄງການທີ່ບໍ່ທັນສາເລັດ ແລະ ກາລັງຈັດຕັ້ງປະຕິບັດຢູ່ ເຊິ່ງມີລາຍລະອຽດ ແລະ ຄວາມຄືບໜ້າດັ່ງຕາຕະລາງລຸ່ມນີ້:

**ຕາຕະລາງ 4. ໂຄງການທີ່ຫລ້າຊ້າໃນຮອບວຽນ 11**

| ຮອບວຽນ | ຊື່ໂຄງການ | ແຂວງ | ເມືອງ | ກຸ່ມບ້ານ | ບ້ານ | ຄວາມຄືບໜ້າ% |
|---|---|---|---|---|---|---|
| 11 | ກໍ່ສ້າງຕະຫລາດຊຸມຊົນ | ແຂວງ ອັດຕະປື | ພູວົງ | ວົງສຳພັນ | ຄຳວົງສາ | 77 |
| 11 | ສ້ອມແປງລະບົບນ້ຳລິນ | ແຂວງ ຫຼວງພະບາງ | ໂພນໄຊ | ກຸ່ມ ບ້ານນ້ຳບໍ່ | ຫ້ວຍມັນ | 70 |
| 11 | ກໍ່ສ້າງສຸກສາລາ | ແຂວງ ອັດຕະປື | ພູວົງ | ສົມບູນ | ພູບາງ | 90 |
| 11 | ກໍ່ສ້າງຂົວອູ່ | ແຂວງ ຫລວງນ້ຳທາ | ນາແລ | ພູຫຼວງ | ພູຫຼວງມີກຈີງ | 58 |
| 11 | ກໍ່ສ້າງຂົວອູ່ | ແຂວງ ຫລວງນ້ຳທາ | ລອງ | ບວກບໍ່ (ຈ່າໃໝ່ ) | ແສນຈຸມປ(ຈ່າປີ) | 65 |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 30 ພະຈິກ 2015*

ຕາຕະລາງ 5. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 11 (ແຍກຕາມຂະແໜງການ)

| ຂະແໜງການ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ກະສິກຳ ແລະ ປ່າໄມ້ | 38 | 37 | 1 | 0 | 0 |
| ຄົມມະນາຄົມ | 57 | 55 | 2 | 0 | 0 |
| ສາທາລະນະສຸກ | 23 | 22 | 1 | 0 | 0 |
| ສຶກສາ | 119 | 119 | 0 | 0 | 0 |
| ນ້ຳສະອາດແລະສຸຂະອະນາໄມ | 90 | 89 | 1 | 0 | 0 |
| ພະລັງງານ ແລະ ບໍ່ແຮ່ | 6 | 6 | 0 | 0 | 0 |
| ລວມ | 333 | 328 | 5 | 0 | 0 |

*<u>ແຫຼ່ງຂໍ້ມູນ</u>: ພະແນກຕິດຕາມ-ປະເມີນຜົນ, ຫລຍ, 30 ພະຈິກ 2015*

## 1.3. <u>ຮອບວຽນ 9 ແລະ ຮອບວຽນ 10</u> (ສົກປີ 2012-2013 ແລະ ສົກປີ 2013-2014)

ໃນຮອບວຽນທີ 9 ຫລຍ ໄດ້ໃຫ້ການສະໜັບສະໜູນຈຳນວນທັງໝົດ 262 ໂຄງການ ຢູ່ 7 ແຂວງເປົ້າໝາຍ (ອັດຕະປື, ເຊກອງ, ສາລະວັນ, ສະຫວັນນະເຂດ, ຫົວພັນ, ຊຽງຂວາງ ແລະ ຫລວງນ້ຳທາ) ແລະ ນຳໃຊ້ງົບປະມານທັງໝົດ 61,114,300,917 ກີບ ມີຈຳນວນ 261 ໂຄງການເທົ່ານັ້ນທີ່ໄດ້ຈັດຕັ້ງປະຕິບັດສຳເລັດ 100 % ແລະ ງົບປະມານທີ່ໄດ້ນຳໃຊ້ 60,979,645,792 ກີບ ຫລື 99.8 % ຂອງງົບປະມານທັງໝົດ. ເຊິ່ງການຈັດຕັ້ງປະຕິບັດບາງໂຄງການໃນຮອບວຽນດັ່ງກ່າວແມ່ນມີ 1 ໂຄງການຄື ໂຄງການກໍ່ສ້າງຫໍພັກນັກສຶກສາ ຢູ່ແຂວງ ຫລວງນ້ຳທາ ເມືອງນາເລ ກຸ່ມສະເລື່ອງ ບ້ານດອນທັບ ນັ້ນແມ່ນຖືກຍົກເລີກເນື່ອງຈາກຖືກໂຄງການສ້າງເຂື່ອນໄຟຟ້າດັ່ງນັ້ນ ພວກເຮົາສາມາດສະຫລຸບໄດ້ວ່າ ສຳຫລັບຮອບວຽນ 9 ແມ່ນຈັດຕັ້ງປະຕິບັດສຳເລັດແລ້ວ 100%.

ໃນຮອບວຽນທີ 10 ຫລຍ ໄດ້ໃຫ້ການສະໜັບສະໜູນທັງໝົດ 393 ໂຄງການ ແລະ ງົບປະມານທັງໝົດຈຳນວນ 79,125,251,302 ກີບ. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແມ່ນຄືກັບທີ່ໄດ້ລາຍງານໃນເດືອນຜ່ານມາມີຈຳນວນ 392 ໂຄງການທີ່ໄດ້ສຳເລັດການກໍ່ສ້າງ ແລະ ງົບປະມານຈຳນວນ 78,883,029,606 ກີບ (99.7%) ແມ່ນໄດ້ຖືກໂອນສຳລັບການຈັດຕັ້ງປະຕິບັດໂຄງການຍ່ອຍເຫລົ່ານັ້ນ. ສຳລັບ 1 ໂຄງການທີ່ຍັງບໍ່ສຳເລັດນັ້ນມີຄວາມຄືບໜ້າໜ້ອຍກວ່າ 50% ຢູ່ແຂວງ ຫຼວງນ້ຳທາ ເມືອງນາແລ ກຸ່ມສະແກນ (ບ້ານສະແກນ) ເປັນໂຄງການກໍ່ສ້າງຂົວອູ່ ມີຄວາມລ້າຊ້າເນື່ອງຈາກວ່າໂຄງການດັ່ງກ່າວເປັນໂຄງການທົດລອງ ແລະ ເປັນໂຄງການຂະໜາດໃຫຍ່ ອຸປະກອນສ່ວນໃຫຍ່ແມ່ນນຳມາຈາກຕ່າງປະເທດ ແລະ ກຳລັງຢູ່ໃນຂັ້ນຕອນເພື່ອກຳນົດມາດຕະຖານເຫລັກຄືນໃຫມ່, ເປັນທົບລົມທົບລະຫວ່າງ ຫລຍ ແລະ ພາກສ່ວນອື່ນ.

## 2. <u>ງົບປະມານ ແລະ ການເບີກຈ່າຍສຳລັບການຈັດຕັ້ງປະຕິບັດໂຄງການຍ່ອຍ ຫລຍ 2</u>

ສຳລັບການເບີກຈ່າຍງົບປະມານ ຮອດທ້າຍເດືອນ ພະຈິກ 2015 ໃນແຕ່ລະຮອບວຽນ ຄື: ຮອບວຽນ 9, ເບີກຈ່າຍໄປແລ້ວ 60,979,645,792 ກີບ ເທົ່າກັບ 99.8% ຂອງງົບປະມານທັງໝົດ, ຮອບວຽນ 10 ເບີກຈ່າຍໄປແລ້ວ 78,883,029,606 ກີບ ເທົ່າກັບ 99.7% ຂອງງົບປະມານທັງໝົດ ແລະ ຮອບວຽນ 11 ແມ່ນໄດ້ເບີກຈ່າຍແລ້ວ ຈຳ

ນອນ 76,210,965,151 ກີບ ຫລື ເທົ່າກັບ 98.1% ຂອງງົບປະມານທັງໝົດ ແລະ ສຳລັບຮອບວຽນ 12 ງົບປະມານທັງໝົດ 82,818,201,583 ກີບ ເບີກຈ່າຍໄປແລ້ວ 51,078,960,928 ກີບ ຫລື ເທົ່າກັບ 61.63% ລາຍລະອຽດດັ່ງຕາຕະລາງລຸ່ມນີ້:

ຕາຕະລາງ 6. ຄວາມຄືບໜ້າໃນການເບີກຈ່າຍງົບປະມານໂຄງການຍ່ອຍ ແຕ່ລະຮອບວຽນ (2011-2015)

| ຮອບວຽນ (ສົກປີ) | ຈ/ນ ໂຄງການ ທັງໝົດ | ງົບປະມານ (ກີບ) | ຈ/ນ ກໍ່ສ້າງ ສຳເລັດ 100% | ການເບີກຈ່າຍ ງົບປະມານ (ກີບ) | ຍອດເຫຼືອ |
|---|---|---|---|---|---|
| ຮອບວຽນ 9 (2011-2012) | 262 | 61,114,300,917 | 261 | 60,979,645,792 | 134,655,125 |
| ຮອບວຽນ 10 (2012-2013) | 393 | 79,125,251,302 | 392 | 78,883,029,606 | 242,221,696 |
| ຮອບວຽນ 11 (2013-2014) | 333 | 77,447,824,567 | 328 | 75,962,827,932 | 1,484,996,635 |
| ຮອບວຽນ 12 (2014-2015) | 438 | 82,818,201,583[1] | 371 | 51,078,960,928 | 31,793,779,626 |
| ລວມ | 1,426 | 300,505,578,369 | 1,352 | 266,904,464,258 | 33,655,653,082 |
| ແຜນການເບີກຈ່າຍງົບປະມານໂຄງການຍ່ອຍ ຮອບວຽນ 13 (2015-2016) | | | | | |
| ຮອບວຽນ (ສົກປີ) | ຈ/ນ ໂຄງການ ທັງໝົດ | ງົບປະມານ (ກີບ) | ຈ/ນ ກໍ່ສ້າງ ສຳເລັດ 100% | ການເບີກຈ່າຍ ງົບປະມານ | ຮອບວຽນ (ສົກປີ) |
| ຮອບວຽນ 13 (ສົກປີ 2015-2016) | 110 | 32,000,000,000 | - | (ຍັງບໍ່ໄດ້ເບີກຈ່າຍ) ການເບີກຈ່າຍນັ້ນ ຈະໄດ້ແບ່ງເປັນ 2 ງວດຄື: ງວດທີໜຶ່ງ ແມ່ນເບີກຈ່າຍ ໃນລະຫວ່າງເດືອນ ມັງກອນ-ກັນຍາ 2016 ແລະ ງວດທີສອງແມ່ນໃນລະຫວ່າງເດືອນ ພະຈິກ-ທັນວາ ຂອງປີ 2016 ງວດລະ 16 ຕື້ກີບ. | ຮອບວຽນ 13 (ສົກປີ 2015-2016) |

*ແຫຼ່ງຂໍ້ມູນ: ພະແນກບໍລິຫານ - ການເງິນ, ທລຍ, 30 ພະຈິກ 2015*

3. <u>ວຽກງານວິຊາສະເພາະ ແລະ ຕິດຕາມໂຄງການ</u>

- <u>ວຽກງານພັດທະນາຊຸມຊົນ</u>

- ຕິດຕາມການວາງແຜນພັດທະນາຂັ້ນບ້ານ ຮູບແບບການພັດທະນາໂດຍຊຸມຊົນເປັນເຈົ້າການ (CDD) ຢູ່ເມືອງ ທ່າປາງທອງ, ແຂວງ ສະຫວັນນະເຂດ ວັນທີ 26-28 ພະຈິກ 2015, ເມືອງທ່າປາງທອງມີ 26 ບ້ານ 61 ຕຸ້ມ ປະຈຸ

[1] *ງົບປະມານອາດມີການປ່ຽນແປງເນື່ອງຈາກສັນຍາກັບຜູ້ຮັບເໝົາບາງໂຄງການກຳລັງດຳເນີນການຢູ່*

ບັນສຳເລັດການວາງແຜນແລ້ວ 5 ບ້ານ ແລະ ຈະສຳເລັດການວາງແຜນຂັ້ນບ້ານໄດ້ 100% ໃນກາງເດືອນ ທັນວາ 2015.

- ການວາງແຜນພັດທະນາຂັ້ນບ້ານ ຮູບແບບ CDD ຂອງ 3 ເມືອງ CDD ໃຫມ່ ມີ ເມືອງ ຊຽງຄໍ້, ຫົວເມືອງ ແລະ ເມືອງ ທ່າປາງທອງແມ່ນ ລວມມີ 136 ບ້ານ 62 ກຸ່ມ ທ້າຍເດືອນ 11 ສຳເລັດແລ້ວ 40% ແລະຈະສຳເລັດ 100% ໃນອາທິດທີ 3 ຂອງເດືອນ ທັນວາ 2015.
- ຝຶກອົບຮົມການຈັດຕັ້ງປະຕິບັດໂຄງການຍ່ອຍໂດຍຊຸມຊົນເອງ (CFA) ໃຫ້ພະນັກງານຂັ້ນແຂວງ, ເມືອງ ແລະ ຂັ້ນບ້ານ ຢູ່ແຂວງຫລວງພະບາງ ວັນທີ 2-6 ພະຈິກ 2015 ກອງປະຊຸມເນັ້ນໃສ່ດ້ານການຈັດຊື້-ຈັດຈ້າງ, ການເຮັດສັນຍາກັບຊຸມຊົນ, ນາຍຊ່າງປະຈຳພາກສະໜາມ, ແລະ ວິຊາການປະຈຳພາກສະໜາມ ແລະ ການກະກຽມກຳມະກອນຢູ່ຂັ້ນບ້ານ ສຳລັບການກໍ່ສ້າງ.
- ເຂົ້າຮ່ວມຈັດຝຶກອົບຮົມຮ່ວມກັບ ບໍລິສັດນ້ຳເທີນຫີນບູນ ເພື່ອເປັນການແລກປ່ຽນບົດຮຽນ ແລະ ປະສົບການກັບບັນດາໂຄງການອື່ນໆ ໃນລະຫວ່າງຕົ້ນເດືອນ ພະຈິກ 2015 ນີ້, ຫົວຂໍ້ຝຶກອົບຮົມ "ວິທີການຈັດຕັ້ງປະຕິບັດວຽກງານພັດທະນາຊຸມຊົນພາຍໃຕ້ຮູບແບບ CDD" ຢູ່ບ້ານຄູນຄຳ, ເມືອງຄູນຄຳ ແຂວງຄຳມ່ວນ ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ 25 ທ່ານ.
- ຕິດຕາມການຈັດກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດວຽກງານ ທລຍ ປະຈຳປີຂັ້ນແຂວງ ກ່ຽວກັບຜົນຂອງການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 12 ຢູ່ແຂວງເປົ້າໝາຍ ທລຍ, ກອງປະຊຸມດັ່ງກ່າວໄດ້ມີການແລກປ່ຽນບົດຮຽນ ແລະ ປະສົບການກັບພາກສ່ວນຕ່າງໆ ຂັ້ນເມືອງ ເພື່ອສົນທະນາ ແລະ ຖອດຖອນບົດຮຽນ ທີ່ຈະຈັດຕັ້ງປະຕິບັດໃນຮອບວຽນຕໍ່ໄປ.
- ສຳເລັດການກະກຽມເຄື່ອມື ແລະ ປຶ້ມຄູ່ມືຝຶກອົບຮົມກ່ຽວກັບສິດສະເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດໃນການຈັດຕັ້ງປະຕິບັດວຽກງານປັບປຸງຊີວິດການເປັນຢູ່ ເສີມສ້າງໂພສະນາການ(LN).
- ສືບຕໍ່ກວດກາ ແລະ ສັງລວມແຜນງົບປະມານປະຈຳປີຮອບວຽນ 13 ຂອງແຕ່ລະເມືອງເພື່ອສົ່ງໃຫ້ພະແນກບໍລິຫານການເງິນ.
- ເຜີຍແຜ່ຂໍ້ມູນຂ່າວສານຜ່ານກະດານຂ່າວກຸ່ມບ້ານເຊິ່ງມີ 3 ຫົວຂໍ້ຂ່າວ; ຄື: ການຈັດກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດໂຄງການຂັ້ນແຂວງ, ການຈັດກອງປະຊຸມປະເມີນຜົນໂຄງການຍ່ອຍປະຈຳປີ, ການທົບທວນແຜນພັດທະນາຂັ້ນບ້ານ.
- ໄດ້ມີການເຜີຍແຜ່ຂໍ້ມູນ-ຂ່າວສານຜ່ານວິທະຍຸແຫ່ງຊາດ, ລາຍການລຸງສ້າງ-ລຸງສາ, ກົມຂ່າວສານແມ່ຍິງລາວ, ໜັງສືພິມຕ່າງໆ ແລະ ເວບໄຊ ທລຍ ລວມມີຫົວຂໍ້ຂ່າວ:
    - ກອງປະຊຸມປະເມີນຜົນໂຄງການຮອບວຽນ 12 (ທລຍ ເມືອງໝອກ)
    - ທລຍ ສະໜັບສະໜູນສ້ອມແປງຊົນລະປະທານ ບ້ານທົ່ງເປົ້

    - ເຜີຍແຜ່ຂໍ້ມູນ ການມີສ່ວນຮ່ວມ ຂອງແມ່ຍິງຕໍ່ກັບການຈັດຕັ້ງປະຕິບັດໂຄງການ ທລຍ ແລະ ຜົນປະໂຫຍດທີ່ແມ່ຍິງຢູ່ໃນບ້ານເປົ້າໝາຍໄດ້ຮັບຈາກການລົງທຶນ ລວມທັງຂໍ້ມູນຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດໂຄງການ ຂອງ ທລຍ ຜ່ານລາຍການໂທລະພາບ, ໜັງສືພິມ, ວາລະສານ ແລະ ວິທະຍຸສະຫະພັນແມ່ຍິງລາວ.

- ສຳເລັດເຂົ້າຮ່ວມວາງສະແດງ ຕະຫລາດນັດກຸ່ມແມ່ຍິງສາກົນ ໃນວັນທີ 7 ພະຈິກ 2015 ທີ່ວິທະຍາເຂດຊັບພະວິຊາ ໂສກປ່າຫລວງ.
- ສຳເລັດເຂົ້າຮ່ວມວາງສະແດງ ຢູ່ກອງປະຊຸມໂຕະມົນ ປະຈຳປີ 2015 ໃນວັນທີ 26-27 ພະຈິກ ທີ່ສູນພັດທະນາ ແລະ ການຮ່ວມມື ລາວ-ຍີ່ປຸ່ນ ແລະ ສຳເລັດການຈັດສຳພາດ ລາຍການຮອບບ້ານຜ່ານເມືອງ, ກ່ຽວກັບ "ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການຍ່ອຍຢູ່ 10 ແຂວງເປົ້າໝາຍ".
- ສຳເລັດອອກແບບ ປ້າຍ Roller ຈຳນວນ 11 ປ້າຍ ແລະ ໄດ້ມີການກະຈາຍຂ່າວ ຄວາມຮູ້ກ່ຽວກັບ ໂພຊະນາການ ຜ່ານໜັງສືພິມ 1 ເລື່ອງ ແລະ ສຳເລັດການປະກອບຂໍ້ມູນ, ຮູບພາບ ກ່ຽວກັບ ການແກ້ໄຂຄວາມທຸກຍາກໃນເຂດຊົນນະບົດ ຂອງ ທລຍ ເຂົ້າໃນລົດແຫ່ຂະບວນ ເພື່ອສະເຫລີມສະຫລອງວັນຊາດທີ່ 2 ທັນວາ ຄົບຮອບ 40 ປີ.

- <u>ວຽກງານວິສະວະກຳ ແລະ ວິຊາການ</u>

- ສຳເລັດການປະດັບປະດາລົດຂະບວນແຫ່ສະເຫລີມສະຫລອງວັນຊາດທີ 2 ທັນວາ 2015.
- ກະກຽມແຜນລົງກວດກາໂຄງການຍ່ອຍ ພາຍໃຕ້ທຶນສົມທົບລັດຖະບານ ຮ່ວມກັບສະພາແຫ່ງຊາດ, ກະຊວງການເງິນ, ຄພທລ ແລະ ກະຊວງແຜນການ.
- ລົງຕິດຕາມໂຄງການຍ່ອຍ ຮອບວຽນທີ 11, 12 ແລະ ສືບຕໍ່ເຮັດວຽກຮ່ວມກັບ ອົງການແຮງງານສາກົນ (ILO).
- ກະກຽມສຳຫລວດໂຄງການຍ່ອຍທີ່ນຳໃຊ້ໂດຍສາກົນ (IDA) ຮອບວຽນທີ 13.
- ຝຶກອົບຮົມຜູ້ອຳນວຍຄວາມສະດວກດ້ານວຽກງານຊຸມຊົນເປັນເຈົ້າໃນດ້ານສຸຂະອານາໄມ (ຊຈລ) ຢູ່ເມືອງນອງ, ແຂວງ ສະຫວັນນະເຂດ; ແຂວງສາລະວັນ, ເຊກອງ ແລະ ແຂວງ ອັດຕະປື.
- ກະກຽມຝຶກອົບຮົມພື້ນຖານການນຳໃຊ້ໂປຣແກຣມແຜນທີ່ ແລະ ສືບຕໍ່ກະກຽມສ້າງຫລັກສູດການນຳໃຊ້ 3D.
- ກະກຽມແຜນລົງຕິດຕາມຄຸນນະພາບໂຄງການຮອບວຽນ 11 ຮ່ວມກັບຊ່ຽວຊານທະນາຄານໂລກ ທ່ານ Garvan.
- ສືບຕໍ່ກະກຽມເອກະສານກວດກາທາງດ້ານສິ່ງແວດລ້ອມ ປະກອບເຂົ້າໃນໂຄງການ ທີ່ຊຸມຊົນເປັນຜູ້ຈັດຕັ້ງປະຕິບັດເອງ ຫລື Community Force Account (CFA).
- ກະກຽມຫລັກສູດການກວດກາຄຸນນະພາບສຳລັບຊຸມຊົນ ເພື່ອໄປຝຶກອົບຮົມໃຫ້ທີມງານຈັດຕັ້ງປະຕິບັດຂັ້ນບ້ານ ສຳລັບໂຄງການທີ່ຊຸມຊົນເປັນຜູ້ຈັດຕັ້ງປະຕິບັດ.
- ຝຶກອົບຮົມຮູບແບບ ແລະ ວິທີການຈັດຕັ້ງປະຕິບັດໂຄງການທົດລອງ ການຈັດຕັ້ງປະຕິບັດໂດຍຊຸມຊົນເຕັມຮູບແບບ ຢູ່ແຂວງ ຫລວງພະບາງ, ອຸດົມໄຊ ແລະ ແຂວງ ສະຫວັນນະເຂດ.

- <u>ວຽກງານຕິດຕາມ-ປະເມີນຜົນ</u>

- ໄດ້ສຳເລັດບົດລາຍງານປະຈຳປີທັງພາສາລາວ ແລະ ພາສາອັງກິດ ແລະ ໄດ້ສົ່ງໃຫ້ຜູ້ໃຫ້ທຶນເພື່ອຂໍຄຳເຫັນ (ສະເພາະສະບັບພາສາອັງກິດ)
- ສຳເລັດການເຮັດປະເມີນພາຍໃນກ່ຽວກັບການນຳໃຊ້ບັນດາໂຄງການທີ່ ທລຍ ໄດ້ຊ່ວຍເຫລືອແຕ່ປີ 2012-2014 (ຮອບວຽນ 9, 10 ແລະ 11) ທີ່ສຶກສາກ່ຽວກັບສະພາບໂຄງການ, ການບຳລຸງຮັກສາ ແລະ ຄວາມພຶງພໍໃຈຂອງພໍ່ແມ່ປະຊາຊົນ.
- ສຳເລັດການປັບປຸງລະບົບຖານຂໍ້ມູນຂອງ ທລຍ ເພື່ອໃຫ້ມີຄວາມຫລາກຫລາຍດ້ານຂໍ້ມູນ ແລະ ສາມາດນຳໃຊ້ໄດ້ທັງລະບົບ online ແລະ offline ຖືວ່າຈະອຳນວຍຄວາມສະດວກຫລາຍໃຫ້ແກ່ພະນັກງານໃນການປ້ອນຂໍ້ມູນຢູ່ຂັ້ນທ້ອງຖິ່ນ.
- ເຂົ້າຮ່ວມການສຶກສາ ຖອດຖອນບົດຮຽນກ່ຽວກັບການຈັດຕັ້ງປະຕິບັດຕາມທິດຂອງວຽກງານສາມສ້າງ ເພື່ອທຳຄວາມເຂົ້າໃຈໃນວຽກງານດັ່ງກ່າວທາງດ້ານທິດສະດີ ແລະ ການຈັດຕັ້ງປະຕິບັດຕົວຈິງ ເພື່ອເປັນບົດຮຽນສຳຄັນໃນການອອກແບ ທລຍ 3.

- <u>ວຽກງານບໍລິຫານ - ການເງິນ</u>

- ສຳເລັດການຄ່ຽນເງິນ ປະຈຳເດືອນ ກັນຍາ 2015, ມູນຄ່າ 419,000 ໂດລາສະຫະລັດ ແລະ ປິດບັນຊີ ເດືອນ ຕຸລາ 2015, ເພື່ອເຮັດບົດລາຍງານການເງິນສຳລັບພະແນກ.
- ສຳເລັດການເບີກຖອນເງິນໂຄງການຍ່ອຍບ້ວງທຶນສົມທົບລັດຖະບານປະຈຳຮອບວຽນ 12, ຈຳນວນ 33 ໂຄງການ ສຳລັບເດືອນພະຈິກ 2015, ຈາກທັງຫມົດ 74 ໂຄງການ, ເປັນມູນຄ່າ 6,175,514,659 ກີບ.
- ພະນັກງານການເງິນສູນກາງໄດ້ລົງຝຶກອົບຮົມວຽກງານສະຫລຸບໂຄງການຍ່ອຍໃນຮູບແບບຂອງ CDD ທີ່ແຂວງ ອຸດົມໄຊ, ຫລວງພະບາງ ແລະ ແຂວງ ສະຫວັນນະເຂດ, ໂດຍສະເພາະແມ່ນເມືອງທົດລອງ.
- ທີມງານຜູ້ກວດສອບພາຍນອກສຳເລັດການກວດສອບເອກະສານທາງດ້ານການເງິນ-ການບັນຊີ ຂອງສົກປີ 2014-2015, ສຳລັບການເຮັດບົດລາຍງານກວດສອບແມ່ນຢູ່ໃນຂັ້ນກະກຽມ.

- <u>ວຽກງານຈັດຕັ້ງ</u>

- ສຳເລັດການສືບຕໍ່ສັນຍາເຮັດວຽກເປັນລາຍປີ ໃຫ້ແກ່ ຊ່ຽວຊານທີ່ປຶກສາອາວຸໂສ (ທ່ານ ຈູລຽນ ໂຣສຊາດ) ແລະ ໄດ້ສົ່ງສຳເນົາໃຫ້ແກ່ຜູ້ໃຫ້ທຶນເປັນທີ່ຮຽບຮ້ອຍ.
- ສຳເລັດການປະກາດຮັບສະໝັກພະນັກງານ ຂັ້ນສູນກາງ:
    - ຫົວໜ້າຮັບຜິດຊອບວຽກປັບປຸງຊີວິດການເປັນຢູ່ເຊື່ອມສານດ້ານໂພຊະນາການ ປະຈຸບັນແມ່ນຢູ່ໃນຂັ້ນຕອນເຈລະຈາຕໍ່ລອງ.
    - ພະນັກງານຄຸ້ມຄອງລະບົບຖານຂໍ້ມູນວຽກງານປັບປຸງຊີວິດການເປັນຢູ່ ເຊື່ອມສານດ້ານໂພຊະນາການ ສຳເລັດການປະກາດຮັບສະໝັກ ປະຈຸບັນ ແມ່ນ ຢູ່ໃນຂັ້ນຕອນການປະເມີນຊີວະປະຫວັດຂອງຜູ້ສະໝັກ
- ດຳເນີນຂະບວນການປະກາດຮັບສະໝັກ ແລະ ຄັດເລືອກ ພະນັກງານຂັ້ນເມືອງ:

- ກຳລັງຢູ່ໃນຂັ້ນຕອນດຳເນີນການປະກາດຮັບສະໝັກ ພະນັກງານ ພັດທະນາຊຸມຊົນ ເມືອງ ນອງ ແຂວງ ສະຫວັນນະເຂດ ເຊິ່ງຜູ້ເກົ່າຈະສິ້ນສຸດສັນຍາ ໃນເດືອນ ມັງກອນ 2016.
- ສຳເລັດການປະກາດຮັບສະໝັກ ປະສານງານຂັ້ນເມືອງ ປະຈຳເມືອງ ສະເພາະເມືອງທີ່ຈັດຕັ້ງປະຕິບັດວຽກ ປັບປຸງຊີວິດການເປັນຢູ່ ເຊື່ອມສານໂພຊະນາການ ຢູ່ໃນ 7 ເມືອງ ແລະ ກຳລັງຢູ່ໃນຂັ້ນຕອນການປະເມີນ ຊີວະປະຫວັດຂອງຜູ້ສະໝັກ.

- ແຈ້ງໃຫ້ພະນັກງານທີ່ສັນຍາຈະສິ້ນສຸດໃນທ້າຍເດືອນ ທັນວາ 2015 ນີ້ ກະກຽມບົດປະເມີນຜົນການປະຕິບັດວຽກ ປະຈຳປີ 2015 ກຳນົດສົ່ງແມ່ນ ວັນທີ 20 ທັນວາ 2015.
- ສະເໜີຫາຜູ້ໃຫ້ທຶນ ເພື່ອຂໍຕໍ່ສັນຍາທີ່ປຶກສາຕ່າງປະເທດ ດ້ານວຽກງານປັບປຸງຊີວິດການເປັນຢູ່ ເຊື່ອມສານໂພຊະນາການ: ໄດ້ຮັບການອະນຸມັດເຫັນດີຈາກຜູ້ໃຫ້ທຶນ ໃນວັນທີ 07 ທັນວາ 2015.

4. <u>ແຜນວຽກສຳລັບເດືອນ ທັນວາ 2015</u>

- <u>ວຽກງານພັດທະນາຊຸມຊົນ</u>

- ຕິດຕາມການວາງແຜນຂັ້ນບ້ານຮູບແບບ CDD ໃຫ້ສຳເລັດ 100% ຂອງຈຳນວນ 136 ບ້ານ 62 ກຸ່ມຢູ່ 3 ເມືອງ CDD ໃໝ່ ແລະ ການຈັດຕັ້ງກອງປະຊຸມຂັ້ນກຸ່ມບ້ານ.
- ປະສານງານກັບທີມງານ EG ເພື່ອວາງແຜນການກວດຄືນຮູບແບບ O&M ສຳລັບບ້ານທີ່ໄດ້ຮັບໂຄງການຍ່ອຍ.
- ຕິດຕາມລະບົບຊຸມຊົນໃນບ້ານທີ່ເຮັດໂຄງການ CFA ຢູ່ເມືອງ ນ້ຳບາກ, ຈອມເພັດ, ໄຊ , ນາໝໍ້ ແລະ ເມືອງນອງ.
- ກະກຽມແຜນຈັດຝຶກອົບຮົມກ່ຽວກັບ ການສົ່ງເສີມສິດສະເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ ສຳລັບພະນັກງານ LN ຢູ່ 7 ເມືອງເປົ້າໝາຍຂອງ 2 ແຂວງ.
- ໃນທ້າຍເດືອນ ທັນວາ 2015, ມີແຜນຈັດທັດສະນະສຶກສາສຳລັບຜູ້ປະສານງານກຸ່ມບ້ານຍິງ ຈາກເມືອງຈອມເພັດ ແລະ ເມືອງນ້ຳບາກ ແຂວງ ຫລວງພະບາງ ເພື່ອໄປແລກປ່ຽນບົດຮຽນກ່ຽວກັບ ການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນທີ່ຕິດພັນກັບການສົ່ງເສີມສິດສະເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ.
- ເຂົ້າຮ່ວມກອງປະຊຸມແລກປ່ຽນບົດຮຽນກ່ຽວກັບວຽກງານ "ສົ່ງເສີມສິດສະເໝີພາບຍິງ-ຊາຍ" ກັບເຄືອຂ່າຍບົດບາດຍິງ-ຊາຍ ໃນ ສປປ ລາວ.
- ສືບຕໍ່ຕິດຕາມ ແລະ ສັງລວມຂໍ້ມູນຜົນກະທົບທາງສັງຄົມ ໃນໄລຍະຈັດຕັ້ງປະຕິບັດໂຄງການຍ່ອຍ ແລະ ຫລັງສຳເລັດໂຄງການຍ່ອຍຢູ່ໃນຮອບວຽນ 12.
- ຕິດຕາມຊຸກຍູ້ ການກະຈາຍຂໍ້ມູນຂ່າວສານຂັ້ນເມືອງ, ຂັ້ນແຂວງ ແລະ ຂັ້ນຊຸມຊົນເປັນປົກກະຕິ ແລະ ສືບຕໍ່ຂຽນຂ່າວໃຫ້ສື່ມວນຊົນ ໃນລາຍການໂທລະພາບ, ວິທະຍຸ, ໜັງສືພິມສະຫະພັນແມ່ຍິງລາວ ແລະ ໂທລະພາບແຫ່ງຊາດ , ວິທະຍຸແຫ່ງຊາດ ເພື່ອກະຈາຍອອກສູ່ສາທາລະນະໃຫ້ໄດ້ຢ່າງໜ້ອຍ 5 ບົດ.
- ສືບຕໍ່ຊຸກຍູ້ໃນການຜະລິດເສື້ອ ທລຍ ຈຳນວນ 1,000 ໂຕ.

- ທົບທວນຄືນ ບັນດາ MOU ກ່ຽວກັບວຽກງານກະຈາຍຂໍ້ມູນຂ່າວສານຂັ້ນແຂວງ ແລະ ເມືອງ ແລະ ສູນກາງ ເພື່ອກຽມພ້ອມສືບຕໍ່ເຊັນສັນຍາ ເພື່ອກະຈາຍຂໍ້ມູນຂ່າວສານໃນຮອບວຽນທີ 13 ຂອງ ທລຍ.
- ກະກຽມພະລິດປຶ້ມ ນະໂຍບາຍດ້ານຊົນເຜົ່າ ພາລາວ-ອັງກິດ, ນະໂຍບາຍການຍົກຍ້າຍຖິ່ນຖານ ແລະ ທົດແທນຄືນ ພາສາລາວ-ອັງກິດ, ນະໂຍບາຍດ້ານສັງຄົມ ແລະ ສິ່ງແວດລ້ອມ ພາສາລາວ-ອັງກິດ, ປຶ້ມສະມາຊິກກຸ່ມທ້ອນເງິນ ຂອງກິດຈະກຳປັບປຸງຊີວິດການເປັນຢູ່ ເພື່ອຮັບໃຊ້ໃນການຂະຫຍາຍອີກ 80 ບ້ານ.
- ກະກຽມພະລິດ ປ້າຍ Roller ຈຳນວນ 11 ປ້າຍ ແລະ ອອກແບບ Booth screen (ສາກວາງສະແດງ)
- ກະກຽມພະລິດເຄື່ອງມື ວຽກງານປັບປຸງຊີວິດການເປັນຢູ່ ເຊື່ອມສານດ້ານໂພຊະນາການ ເພື່ອຮັບໃຊ້ 80 ບ້ານຂະຫຍາຍໃໝ່.
- ກະກຽມອອກຂ່າວ ໃນລາຍການໂທລະພາບ ສະຫະພັນແມ່ຍິງລາວໃຫ້ໄດ້ 1 ຄັ້ງ ແລະ ສືບຕໍ່ປັບປຸງ Script ແລະ TOR ສຳລັບຈັດຫາຜູ້ພະລິດ DVD ກ່ຽວກັບແມ່ຍິງຕົວແບບ ແລະ ເຂັ້ມແຂງໃນການປະກອບສ່ວນຈັດຕັ້ງປະຕິບັດ ວຽກງານຊ່ວຍ ທລຍ ຢູ່ຂັ້ນກຸ່ມບ້ານ ແລະ ບ້ານເປົ້າໝາຍ ທລຍ ໃຫ້ໄດ້ 1 ເລື່ອງ.
- ສືບຕໍ່ພະລິດ DVD ກະຕຸນ ກ່ຽວກັບ ຄວາມໂປ່ງໃສ.

- <u>ວຽກງານວິສະວະກຳ</u>

- ສືບຕໍ່ກະກຽມແຜນລົງກວດກາໂຄງການຍ່ອຍ ພາຍໃຕ້ທຶນສົມທົບລັດຖະບານ ຮ່ວມກັບສະພາແຫ່ງຊາດ, ກະຊວງການເງິນ, ຄພທສ ແລະ ກະຊວງແຜນການ.
- ສືບຕໍ່ລົງຕິດຕາມໂຄງການຍ່ອຍ ຮອບວຽນທີ 11, 12 ແລະ ສືບຕໍ່ເຮັດວຽກຮ່ວມກັບ ອົງການແຮງງານສາກົນ (ILO).
- ສືບຕໍ່ກະກຽມສຳຫລວດໂຄງການຍ່ອຍ IDA ຮອບວຽນທີ 13.
- ສືບຕໍ່ຝຶກອົບຮົມຜູ້ອຳນວຍຄວາມສະດວກດ້ານ ວຽກງານ ຊຸມຊົນເປັນເຈົ້າໃນດ້ານສຸຂະອານາໄມ (ຊຈສ) ຢູ່ເມືອງນອງ, ແຂວງ ສະຫວັນນະເຂດ; ແຂວງສາລະວັນ, ເຊກອງ ແລະ ແຂວງ ອັດຕະປື.
- ສືບຕໍ່ກະກຽມຝຶກອົບຮົມພື້ນຖານການນຳໃຊ້ໂປຣແກຣມແຜນທີ່ ແລະ ສືບຕໍ່ກະກຽມສ້າງຫລັກສູດການນຳໃຊ້ 3D.
- ສືບຕໍ່ກະກຽມແຜນລົງຕິດຕາມຄຸນນະພາບໂຄງການຮອບວຽນ 11 ຮ່ວມກັບຊ່ຽວຊານທະນາຄານໂລກ ທ່ານ Garvan.
- ຂຶ້ນແຜນຮ່ວມມືກັບສະພາແຫ່ງຊາດ ເພື່ອເອົານັກສຶກສາປີສຸດທ້າຍລົງກວດກາຄຸນນະພາບຂອງໂຄງການຍ່ອຍຢູ່ແຂວງ ສາລະວັນ ແລະ ແຂວງ ສະຫວັນນະເຂດ.
- ສັງລວມຂໍ້ມູນໂຄງການຍ່ອຍຮອບວຽນ 13 ແລະ ລົງກວດກາໂຄງການຍ່ອຍຮ່ວມກັບທະນາຄານໂລກທີ່ແຂວງສະຫວັນນະເຂດ.
- ຕິດຕາມໂຄງການລົງປະເມີນຜົນຂອງບໍລິສັດທີ່ປຶກສາກ່ຽວກັບ Cost Effective and O&M.

- <u>ວຽກງານຕິດຕາມ-ປະເມີນຜົນ</u>

- ຈັດຝຶກອົບຮົມການນຳໃຊ້ລະບົບຖານຂໍ້ມູນໃຫມ່ໃຫ້ພະນັກງານຕິດຕາມ-ປະເມີນຜົນທຸກຄົນໃນຂັ້ນສູນກາງ, ແຂວງ ແລະ ເມືອງ.
- ສະຫລຸບສັງລວມຜົນໄດ້ຮັບຂອງການຈັດຕັ້ງປະຕິບັດວຽກງານ ທລຍ ທັງໝົດເພື່ອປຶກສາກັບຜູ້ໃຫ້ທຶນ.
- ຕິດຕາມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການຂອງສົກປີ 2015-2016 ແລະ ເອົາຂໍ້ມູນທີ່ຈຳເປັນເຂົ້າໃນລະບົບຖານຂໍ້ມູນ.

- <u>ວຽກງານບໍລິຫານ-ການເງິນ</u>

- ກະກຽມເບີກຖອນເງິນໂຄງການຍ່ອຍບ້ວງທຶນສົມທົບລັດຖະບານຮອບວຽນ 12, ຈຳນວນ 36 ໂຄງການ, ປະມານ 8 ຕື້ກີບ ແລະ ປິດສະຫລຸບບັນຊີປະຈຳເດືອນ ພະຈິກ 2015, ສຳລັບສົກປີ 2015-2016.
- ກະກຽມເອກະສານຄ່ຽນເງິນໂຄງການຍ່ອຍບ້ວງຜູ້ໃຫ້ທຶນສຳລັບຮອບວຽນ 12 ຂອງແຂວງ ສາລະວັນ ແລະ ແຂວງ ຫລວງນ້ຳທາ 510,912 ໂດລາສະຫະລັດ ນຳຄັງເງິນແຫ່ງຊາດ.
- ກະກຽມຄ່ຽນເງິນບ້ວງບໍລິຫານປະຈຳເດືອນ ພະຈິກ 2015 ປະມານ 315,000 ໂດລາ, ນຳຄັງເງິນແຫ່ງຊາດ.

- <u>ວຽກງານຈັດຕັ້ງ</u>

- ກະກຽມການສັງລວມບົດປະເມີນການປະຕິບັດວຽກ ທີ່ຈະຖືກສົ່ງມາຈາກແຕ່ລະແຂວງ ລວມທັງສູນກາງ.
- ກະກຽມສັນຍາພະນັກງານ ປະຈຳປີ 2016.
- ສັງລວມລາຍຊື່ພະນັກງານ ທັງໝົດ ເພື່ອຕິດຕາມການສືບຕໍ່ສັນຍາປະກັນໄພ.
- ດຳເນີນຂັ້ນຕອນ ການປະເມີນຜູ້ສະໝັກ ພະນັກງານຄຸ້ມຄອງລະບົບຖານຂໍ້ມູນວຽກງານປັບປຸງຊີວິດການເປັນຢູ່ເຊື່ອມສານດ້ານໂພຊະນາການ.

| <u>ຜູ້ອຳນວຍການບໍລິຫານ ທລຍ</u> | <u>ຫົວໜ້າພະແນກ ຕິດຕາມປະເມີນຜົນ</u> | <u>ສັງລວມ ແລະ ລາຍງານ</u> |
|---|---|---|
| ບຸນຂວາງ ສຸວັນນະພັນ<br>Bounkhouang SOUVANNAPHANH | ທັດທະຈັນ ພົມພັນທະວົງ | ມະນີວັນ ອິນທະປັນຍາ |